**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກົມການບິນພົນລະເຮືອນ**

**ຄະນະກຳມະການຈັດຊື້-ຈັດຈ້າງ**

ນະຄອນຫຼວງວຽງຈັນ, ວັນທີ 8 ສິງຫາ 2025

# ໜັງສືແຈ້ງເຊີນປະມູນ

1. ໃນນາມຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ໄດ້ຮັບອະນຸມັດງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ຂອງກົມການບິນພົນລະເຮືອນ ປະຈຳປີ 2025, ລາຍລະອຽດໄດ້ລະບຸໄວ້ໃນເອກະສານຄຳແນະນຳການປະມູນ;

2. ຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຮຽນເຊີນ ບັນດາບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຮ່ວມຊື້ຊອງ ແລະ ຍື່ນຊອງປະມູນ ໃນການຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ວຽກງານສະໜອງການບໍລິການ ແລະ ສ້ອມແປງຕຶກອາຄານ ຂອງກົມການບິນພົນລະເຮືອນ ປະຈຳປີ 2025 ເຊິ່ງມີລາຍລະອຽດ ດັ່ງນີ້:

- ຊື້ເຄື່ອງຮັບໃຊ້ຫ້ອງການ ຊອງ 1/500,000 ກີບ (ກຳນົດໄລຍະການຈັດຕັ້ງປະຕິບັດ 30 ວັນ);
- ບໍລິການຕັດເຄື່ອງແບບພະນັກງານ ຊອງ 1/500,000 ກີບ (ກຳນົດໄລຍະການຈັດຕັ້ງປະຕິບັດ 60 ວັນ);
- ສ້ອມແປງຫ້ອງການ ຊອງ 1/1,000,000 ກີບ (ກຳນົດໄລຍະການຈັດຕັ້ງປະຕິບັດ 60 ວັນ);
- ບໍລິການອື່ນໆ (ວ່າຈ້າງຊ່ວຍວຊານ) ຊອງ 1/500,000 ກີບ (ກຳນົດໄລຍະການຈັດຕັ້ງປະຕິບັດ 30 ວັນ);
- ບໍລິການປີ້ເຮືອບິນໄປວຽກທາງການ ພາຍໃນ ແລະ ຕ່າງປະເທດ ຊອງ 1/500,000 ກີບ (ກຳນົດໄລຍະການຈັດຕັ້ງປະຕິບັດ 30 ວັນ).

3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

4. ບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ໂດຍຍື່ນໜັງສືຫາ ທີ່ຢູ່ຂ້າງລຸ່ມ. ວິທີຊຳລະແມ່ນຕ້ອງຈ່າຍເປັນເງິນສົດ;

5. ຊອງປະມູນຈະຕ້ອງສົ່ງຫາຕາມທີ່ຢູ່ຂ້າງລຸ່ມກ່ອນເວລາ 16:00 ໂມງ ຂອງວັນທີ 16 ຕຸລາ 2025. ການສົ່ງ ດ້ວຍລະບົບເອເລັກໂຕຼນິກ ແມ່ນບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະ ເປີດຕໍ່ສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມ ໃນເວລາ 09:00 ໂມງ ຂອງວັນທີ 20 ຕຸລາ 2025;

6. ທຸກໆເອກະສານຈະຕ້ອງປະກອບດ້ວຍການຄ້ຳປະກັນການປະມູນດ້ວຍກຽດ;

7. ບ່ອນຢູ່ທີ່ເວົ້າເຖິງຢູ່ຂ້າງລຸ່ມນີ້ແມ່ນ:
   ທ່ານ ນາງວົງທິບ ທະວິສຸກ
   ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ
   ສຳນັກງານຕັ້ງຢູ່ສະໜາມບິນສາກົນວັດໄຕ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
   ອີເມວ: laodca@laotel.com ໂທລະສັບ : 021 513163, ແຟັກ: 021 520237

ດ້ວຍຄວາມເຄົາລົບ ແລະ ນັບຖື.

ທ່ານ ວິໄຊ ບົວວັນ
ຮອງຫົວໜ້າກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ
ສຳນັກງານຕັ້ງຢູ່ສະໜາມບິນສາກົນວັດໄຕ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ

**ຫົວໜ້າກົມ**

ຄຳຫຼ້າ ພົມມະວັນ

**<u>ຜູ້ປະສານງານ:</u>**

1. ທ່ານ ທອງສະໃໝ ທຳມະວົງສາ ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ ເບີໂທຕິດຕໍ່: 020 22404897
2. ທ່ານ ແສງສຸຣິວົງ ភັດຕິຍະສັກ ວິຊາການ ພະແນກຈັດຕັ້ງ ແລະ ບໍລິຫານ ເບີໂທຕິດຕໍ່: 020 54777775